Jesus Film Project®
A Cru Ministry

# ພິຈາລະນາ
# ເຖິງພຣະເຢຊູ



ກິນລະຍຸດ ໑໐ ອາທິດສຳລັບ
ກຸ່ມຊຸມຊິນນ້ອຍໆ

# ພິຈາລະນາເຖິງພຣະເຢຊູ

## ກົນລະຍຸດ ໑໐ ອາທິດສຳລັບ ກຸ່ມຊຸມຊົນນ້ອຍໆ

*ການນຳໃຊ້ໜັງ* Magdalena: Released From Shame *ເພື່ອຊ່ວຍໃຫ້ຜູ້ຄົນເຂົ້າໃຈວ່າພຣະເຢຊູແມ່ນໃຜ ແລະ ການຕິດຕາມພຣະອົງໝາຍຄວາມວ່າແນວໃດ.*

Jesus Film Project®
A Cru Ministry

## ຂັ້ນຕອນສຳລັບຜູ້ນຳ

# ພຣະເຈົ້າຈະໃຊ້ທ່ານໃນທາງທີ່ມີຄວາມໝາຍເພື່ອຣາຊອານາຈັກຂອງພຣະອົງ ທ່າມກາງຊຸມຊົນຂອງທ່ານ.

ໃຫ້ທ່ານໃຊ້ເວລາທົບທວນຄວາມຈື່ຈຳໃນຄັ້ງທຳອິດທີ່ໄດ້ຮຽນຮູ້ວ່າ ພຣະເຢຊູແມ່ນໃຜ-ພຣະອົງຄືພຣະເຈົ້າຜູ້ຊົງມີພຣະເມດຕາ, ຜູ້ຊົງອ່ອນໂຍນ, ຜູ້ຊົງບໍຣິສຸດ, ຜູ້ຊົງຖ່ອມຕົນ ແລະ ຜູ້ຊົງເປັນຈອມກະສັດ. ພຣະອົງຊົງເປັນທຸກສິ່ງທີ່ທ່ານຫວັງໄວ້ ແລະ ເປັນທຸກສິ່ງທີ່ສາມາດຊ່ວຍ ແລະ ໄຖ່ບາບຂອງທ່ານໄດ້. ພຣະອົງຊົງເປັນຄວາມຫວັງຂອງທ່ານ, ຂອງທຸກຊົນຊາດ ແລະ ຂອງທຸກຄົນ.

ທ່ານອັກຄະສາວົກໂຢຮັນໄດ້ຂຽນໄວ້ໃນພຣະຄຳພຣະນິມິດວ່າ:

"ຫຼັງຈາກນັ້ນ ຂ້າພະເຈົ້າໄດ້ເຫັນປະຊາຊົນຫຼວງຫຼາຍຈົນນັບບໍ່ຖ້ວນ, ພວກເຫຼົ່ານີ້ມາຈາກທຸກປະເທດ, ທຸກເຜົ່າ, ທຸກຊົນຊາດ, ທຸກພາສາ, ຄົນເຫຼົ່ານີ້ນຸ່ງເສື້ອຄຸມສີຂາວ ຖືກ້ານຕານຢືນຢູ່ຕໍ່ໜ້າບັນລັງ ແລະ ຊ່ອງໜ້າພຣະເມສານ້ອຍ"  (ພຣະນິມິດ ໗:໙-໑໐).

ທ່ານໄດ້ຖືຄວາມຮູ້ທີ່ມີຣິດອຳນາດຂອງພຣະເຈົ້າຜູ້ຊົງເປັນກະສັດເໜືອກະສັດທັງຫຼາຍ ແລະ ພວກເຮົາຢາກເສີມສ້າງທ່ານໃຫ້ສາມາດແບ່ງປັນເລື່ອງລາວຂອງພຣະອົງໃຫ້ກັບຄົນອື່ນໆ ແລະ ເຕີບໃຫຍ່ໄປພ້ອມກັນໃນຄອບຄົວຂອງພຣະເຈົ້າ.

ພຣະເຢຊູໄດ້ກ່າວໃນພຣະກິດຕິຄຸນຂໍ້ສຸດທ້າຍ ຂອງພຣະຄຳມັດທາຍວ່າ:

"ດັ່ງນັ້ນ ເຮົາຈຶ່ງບອກເຈົ້າຕາມຄວາມຈິງວ່າ, ສິ່ງໃດທີ່ພວກເຈົ້າຈະຜູກມັດໄວ້ເທິງແຜ່ນດິນໂລກນີ້ ສິ່ງນັ້ນກໍຈະຖືກຜູກມັດໄວ້ໃນສະຫວັນ ແລະ ສິ່ງໃດທີ່ພວກເຈົ້າແກ້ໃນແຜ່ນດິນໂລກນີ້ ສິ່ງນັ້ນກໍຈະຖືກແກ້ໃຫ້ຫຼຸດເສຍແແລ້ວໃນສະຫວັນເໝືອນກັນ" (ມັດທາຍ ໒໘:໑໙-໒໐).

ພຣະອົງບອກໃຫ້ພວກເຮົາອອກໄປ, ສ້າງສາວົກ, ບັບຕິດສະມາພວກເຂົາ ແລະ ສັ່ງສອນພວກເຂົາ ແລະ ພຣະອົງຈະຊົງຢູ່ກັບພວກເຮົາສະເໝີໄປ. ຊົງຢ່າງໄປກັບພວກເຮົາທ່າມກາງຫຸບເຂົາ ແລະ ຍອດພູສູງແຕ່ລະໜ່ວຍ. *ພິຈາລະນາເຖິງພຣະເຢຊູ* ເປັນວິທີການທີ່ຈະຊ່ວຍທ່ານໃນການນຳໃຊ້ສິ່ງເຫຼົ່ານີ້ ທ່ານສາມາດສ້າງສາວົກທີ່ມີຫົວໃຈມຸ່ງຫມັ້ນຄືຜູ້ທີ່ໄດ້ແບ່ງປັນເລື່ອງລາວໃນຊີວິດຮ່ວມກັນ ເພື່ອພວກເຂົາຈະໄດ້ຮຽນຮູ້ຢ່າງເລິກເຊິ່ງວ່າພຣະເຢຊູແມ່ນໃຜ.

*ພິຈາລະນາເຖິງພຣະເຢຊູ* ໃຊ້ເນື້ອຫາສ່ວນຕ່າງໆຈາກໜັງເລື່ອງນີ້ *Magdalena Released From Shame*, ເຊິ່ງເລົ່າເຖິງເລື່ອງລາວໃນພຣະຄຳພີກ່ຽວກັບພຣະເຢຊູຜ່ານມຸມມອງຂອງນາງມາລີມັກດາລາ ແລະ ຜ່ານຄຳພະຍານຂອງນາງ. ໜັງເລື່ອງນີ້ເປັນເຄື່ອງມືທີ່ດີໃນການນຳໃຊ້ກັບກຸ່ມສາວົກນ້ອຍໆ. ບໍ່ວ່າຈະເປັນຄອບຄົວ, ໝູ່ເພື່ອນ ຫຼື ແມ່ນແຕ່ກັບຄົນຮູ້ຈັກ. ໃນຂະນະທີ່ພວກເຂົາກຳລັງເບິ່ງໜັງແຕ່ລະສາກ ພວກເຂົາສາມາດຮຽນຮູ້ຈາກຊີວິດຂອງພຣະເຢຊູໄດ້ ທັງການອັດສະຈັນ, ການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນ. ຫຼາຍໆຄົນຢາກຈະຕິດຕາມພຣະອົງເພາະໄດ້ຮູ້ວ່າພຣະອົງແມ່ນໃຜ ອີກສ່ວນໜຶ່ງກໍອາດຕ້ອງການໂອກາດໃນການຮູ້ຮຽນເພີ່ມເຕີມກ່ຽວກັບຊີວິດຂອງພຣະອົງຫຼັງຈາກທີ່ໜັງຈົບ *ພິຈາລະນາເຖິງພຣະເຢຊູ* ໃຫ້ເຊີນຊວນເພື່ອແບ່ງກຸ່ມສົນທະນາຍ່ອຍໃນຕໍ່ໜ້າ ໂດຍການໃຊ້ *"Rivka"* ຫຼື *"Knowing Jesus"* ທີ່ພັດທະນາໂດຍ Jesus Film Project®.

ມີ ໔ ຂັ້ນຕອນງ່າຍໆໃນການນຳໃຊ້ *ພິຈາລະນາເຖິງພຣະເຢຊູ*.

# ຂັ້ນຕອນທີ ໑

# ០໑

## ໃຫ້ເລືອກເອົາຜູ້ທີ່ທ່ານຢາກເຂົ້າເຖິງ

ແມ່ນໃຜທີ່ທ່ານຕ້ອງການໃຫ້ລາວຮູ້ຈັກກ່ຽວກັບພຣະເຢຊູຫຼາຍຂຶ້ນ? ມີໝູ່ບ້ານໃກ້ໆ ຫຼື ເພື່ອນບ້ານທີ່ຕ້ອງການຢາກຮູ້ຈັກພຣະອົງບໍ? ກຸ່ມໝູ່ເພື່ອນ ຫຼື ເພື່ອນຮ່ວມງານ?

ສິ່ງທໍາອິດແມ່ນໃຫ້ລະບຸ "ບຸກຄົນແຫ່ງສັນຕິສຸກ" ໃນສະຖານທີ່ນັ້ນ. ລູກາ ໑໐:໖ ພຣະເຢຊູໄດ້ສົ່ງຜູ້ຕິດຕາມພຣະອົງ ໗໔ ຄົນອອກໄປ ພ້ອມກັບນໍາເອົາຂ່າວສານຂອງພຣະອົງໄປພ້ອມ, ໂດຍສັ່ງໃຫ້ພວກເຂົາຊອກຫາບຸກຄົນແຫ່ງສັນຕິສຸກໃນທຸກໆບ່ອນທີ່ພວກເຂົາໄປ.

ບຸກຄົນແຫ່ງສັນຕິສຸກຄືຄົນໜຶ່ງ, ທີ່ຍັງບໍ່ທັນໄດ້ຮັບເຊື່ອ, ຄືຜູ້ທີ່:

- ເປີດໃຈໃຫ້ກັບພຣະເຢຊູ ແລະ ຄໍາສອນຂອງພຣະອົງ.
- ມີອິດທິພົນ ແລະ ເປັນທີ່ຮູ້ຈັກດີໃນຊຸມຊົນ
- ເຕັມໃຈ ແລະ ພ້ອມທີ່ຈະແນະນໍາທ່ານໃຫ້ກັບເຄືອຂ່າຍສັງຄົມຂອງພວກເຂົາ ໃນຊຸມຊົນທີ່ທ່ານໄດ້ເລືອກ.
- ເຕັມໃຈທີ່ຈະຊ່ວຍທ່ານເຊີນຄົນອື່ນໆມາຮ່ວມເບິ່ງໜັງ Magdalena

ພວກເຮົາແນະນໍາໃຫ້ທ່ານທໍາຄວາມຮູ້ຈັກກັບບຸກຄົນນີ້. ທ່ານສາມາດໃຊ້ ៣ ຂັ້ນຕອນນີ້ເພື່ອພັດທະນາໃຫ້ມີຄວາມສໍາພັນທີ່ດີກັບບຸກຄົນແຫ່ງສັນຕິສຸກຂອງທ່ານ.

### ກ. ການອະທິຖານ

ອະທິຖານເພື່ອບຸກຄົນແຫ່ງສັນຕິສຸກຄົນນີ້. ທູນຂໍກັບພຣະເຈົ້າໃຫ້ທ່ານຮູ້ວ່າບຸກຄົນນັ້ນແມ່ນໃຜ? ຜູ້ທີ່ຈະແນະນໍາທ່ານໃຫ້ກັບຄອບຄົວ ແລະ ໝູ່ເພື່ອນຂອງພວກເຂົາ. ເມື່ອທ່ານໄດ້ຮູ້ຈັກກັບບຸກຄົນນີ້ ໃຫ້ຖາມວ່າມີເລື່ອງຫຍັງໃຫ້ອະທິຖານເພື່ອບໍ່?

### ຂ. ຫ່ວງໃຍ

ເມື່ອທ່ານອະທິຖານເພື່ອເພື່ອນໃຫມ່ຂອງທ່ານ ແລະ ເລີ່ມເຂົ້າໃຈເຖິງຄວາມຕ້ອງການຂອງພວກເຂົາແລ້ວ, ສະແດງໃຫ້ພວກເຂົາເຫັນວ່າທ່ານຫ່ວງໃຍພວກເຂົາດ້ວຍການຮັບຟັງ ແລະ ຕອບສະໜອງຕໍ່ຄວາມຕ້ອງການເຫຼົ່ານັ້ນ. ຈົ່ງເປັນເພື່ອນທີ່ສັດຊື່ ແລະ ສະໜັບສະໜູນພວກເຂົາ.

### ຄ. ແບ່ງປັນ

ເມື່ອພວກເຮົາຮັບຟັງຜູ້ຄົນ ແລະ ຊ່ວຍເຫຼືອຕາມຄວາມຕ້ອງການຂອງພວກເຂົາ. ພວກເຮົາຈະໄດ້ຮັບໂອກາດພິເສດໃນການແບ່ງປັນຂ່າວປະເສີດຂອງພຣະເຢຊູ. ເມື່ອໂອກາດນັ້ນມາເຖິງ ຈົ່ງແບ່ງປັນຂ່າວປະເສີດນັ້ນອອກໄປ ແລະ ການອະໄພຂອງພຣະອົງ. ຖ້າພວກເຂົາຍັງບໍ່ຮູ້ຈັກພຣະອົງ.

# ຂັ້ນຕອນທີ 4

# 04

## ເບິ່ງໜັງ *Magadelena From Shame*

ສຳລັບກົນລະຍຸດນີ້, ພວກເຮົາຈະໃຊ້ກຸ່ມຂອງຜູ້ຍິງເປັນຕົວຢ່າງ, ຢ່າງໃດກໍຕາມ, ຜູ້ຊາຍ ແລະ ແຕ່ລະຄອບຄົວກໍຍິນດີ ແລະ ສະໜັບສະໜູນໃຫ້ໃຊ້ *ພິຈາລະນາເຖິງພຣະເຢຊູ* ເຊັ່ນດຽວກັນ.

ຮ່ວມກັບບຸກຄົນແຫ່ງສັນຕິສຸກ, ເຊີນໝູ່ຜູ້ຍິງຈຳນວນໜຶ່ງມາເບິ່ງ *Magadelena* ທີ່ອາດຈະຢູ່ເຮືອນຂອງບຸກຄົນແຫ່ງສັນຕິສຸກ. ກິນອາຫານຮ່ວມກັນ ແລະ ເບິ່ງໜັງນຳກັນ ຫຼັງຈາກນັ້ນ ຫຼື ຈັດກຽມອາຫານວ່າງ ແລະ ບາງຢ່າງເພື່ອດື່ມ. ເບິ່ງແຍງທຸກຄົນທີ່ເຂົ້າຮ່ວມເປັນຢ່າງດີ ແລະ ປະຕິບັດດ້ວຍຄວາມເອື້ອເຟື້ອເພື່ອແຜ່ຢ່າງໃຈກວ້າງ.

*Magadelena* ສາມາດເບິ່ງຟຣີໄດ້ທີ່ເວັບໄຊທ໌ Jesus Film Project website ແລະ ແອັບ Jesus Film Project ທີ່ມີຫຼາຍກວ່າ 800 ພາສາຖ້າຫາກທ່ານມີໂທລະທັດທີ່ມີບ່ອນສຽບ USB ໃຫ້ໃຊ້ flash drive ໃນການສາຍໜັງ. ຫາກທ່ານມີອຸປະກອບແທັບແລດທີ່ມີລຳໂພງ Bluetooth ທ່ານສາມາດເປີດໜັງໃຫ້ກຸ່ມນ້ອຍຂອງທ່ານໄດ້ເບິ່ງບໍ່ເກີນ 10 ຄົນ ຫຼື ຫຼາຍກວ່ານັ້ນໃນສະພາບແວດລ້ອມທີ່ໃຫຍ່ຂຶ້ນ.

ເມື່ອໜັງຈົບລົງ, ໃຫ້ເຊີນຊວນພວກເຂົາ 4 ຢ່າງນີ້ເພື່ອການເຂົ້າຮ່ວມໃນຄັ້ງຕໍ່ໄປ:

ຂັ້ນຕອນທຳອິດ. ເຊີນຊວນໃຫ້ຜູ້ຍິງເປັນຜູ້ຕິດຕາມພຣະເຢຊູ. ໃຫ້ທ່ານລອງແບ່ງປັນເລື່ອງລາວຂອງທ່ານເອງ ແລ້ວເຊື່ອມໂຍງກັບເລື່ອງລາວໃນໜັງທີ່ພວກເຂົາເຫັນ.

ຂັ້ນຕອນທີສອງ, ເຊີນຊວນໃຫ້ພວກເຂົາກັບມາອີກໃນມື້ທັດໄປເພື່ອສົນທະນາເລື່ອງຂອງພຣະເຢຊູ. ທ້າທາຍພວກເຂົາໃຫ້ພາໝູ່ເພື່ອນຄົນອື່ນໆທີ່ມີຄວາມສົນໃຈມາຮ່ວມ. ວິທີນີ້ຈະຊ່ວຍໃຫ້ທ່ານສາມາດຕອບຄຳຖາມທີ່ພວກເຂົາມີໄດ້. ແລ້ວເລີ່ມສຶກສາເລື່ອງລາວຂອງພຣະເຢຊູຜ່ານຫຼັກສູດ *ພິຈາລະນາເຖິງພຣະເຢຊູ.*

ຫຼັງຈາກນັ້ນ, ທຳຄວາມຮູ້ຈັກກັບຜູ້ຍິງທີ່ມາຮ່ວມງານ. ເລື່ອງລາວ ແລະ ຮູບແບບ ທີ່ພວກເຂົາໄດ້ເຫັນໃນໜັງ ອາດຈະເຮັດໃຫ້ເລື່ອງລາວທີ່ເຈັບປວດຂອງພວກເຂົາຖືກເປີດເຜີຍອອກມາ. ລອງອະທິຖານເພື່ອພວກເຂົາເປັນລາຍບຸກຄົນຖ້າຈຳເປັນ.

ດຽວນີ້ມາເຖິງຕອນທີ່ດີທີ່ສຸດແລ້ວ!

# ຂັ້ນຕອນທີ ໓

# ໐໓

## ໃຫ້ເລີ່ມຕົ້ນກຸ່ມຊຸມຊົນ *ພິຈາລະນາເຖິງພຣະເຢຊູ* ນ້ອຍໆຂອງທ່ານ

ອະທິຖານເພື່ອຜູ້ຍິງຄົນໃດທີ່ສະແດງໃຫ້ເຫັນວ່າມີຄວາມສົນໃຈໃນເລື່ອງຂອງພຣະເຢຊູ ແລະ ໃນກຸ່ມນ້ອຍນັ້ນ. ເພື່ອວ່າຫົວໃຈທີ່ເປັນມົນທິນຂອງລາວຈະອ່ອນລົງ ແລະ ໄດ້ກັບໃຈໃໝ່ໂດຍພຣະວິນຍານບໍຣິສຸດ. ອະທິຖານໃຫ້ເລື່ອງລາວຂອງພຣະເຢຊູທີ່ຈະກາຍເປັນເລື່ອງສຳຄັນ ແລະ ມີຄວາມໝາຍໃນຊີວິດຂອງພວກເຂົາ ແລະ ເພື່ອວ່າພວກເຂົາຈະສາມາດເຊື່ອມຕໍ່ກັບເລື່ອງນັ້ນເປັນການສ່ວນຕົວໄດ້.

ໃນການພົບປະຄັ້ງນີ້ ແລະ ຄັ້ງຕໍ່ໆໄປ. ໃຫ້ທ່ານໃຊ້ກົນລະຍຸດ ໑໐ ຂໍ້ຈາກໜັງເລື່ອງ *Magdalena* ເພື່ອຮຽນຮູ້ ແລະ ໂອ້ລົມກ່ຽວກັບພຣະເຢຊູຮ່ວມກັນໃຫ້ຫຼາຍຂຶ້ນ. ທາງລຸ່ມນີ້ຄືຮູບແບບທົ່ວໄປສຳລັບແຕ່ລະກົນລະຍຸດ:

໑. ຜູ້ຍິງທີ່ໄດ້ເບິ່ງ ແລະ ໄດ້ຮູ້
໒. ພຣະເຢຊູ: ເປັນຫຼາຍກວ່າຜູ້ທຳນວາຍ
໓. ການປົດປ່ອຍຈາກການເປັນທາດ
໔. ພຣະເມດຕາຂອງພຣະເຢຊູ
໕. ຄວາມຂັດແຍ້ງ ແລະ ອັກຄະຕິ
໖. ການປຽວຢາຮັກສາ ແລະ ການຟື້ນຟູ
໗. ຄວາມອັບອາຍ ແລະ ກຽດຕິຍົດ
໘. ການຮູ້ຈັກພຣະເຢຊູ ແລະ ການໃຫ້ອະໄພຂອງພຣະອົງ
໙. ປາຖະໜາໃນການຍອມຮັບ ແລະ ແບ່ງປັນເລື່ອງຂອງພຣະເຢຊູກັບຄົນອື່ນໆ
໑໐. ໃຊ້ຊີວິດກັບພຣະເຢຊູ

ໃນຊ່ວງແຕ່ລະອາທິດທີ່ຈະມາເຖິງ. ກຸ່ມໃໝ່ຂອງທ່ານຈະເຕີບໃຫຍ່ຂຶ້ນ ພວກເຂົາຈະເຂົ້າໃຈກ່ຽວກັບພຣະເຢຊູຄຣິດ ແລະ ຄວາມໝາຍຂອງການເປັນຜູ້ຕິດຕາມຂອງພຣະອົງ. ພວກເຂົາຈະມີໂອກາດໄດ້ສຳພັດການໃຊ້ຊີວິດຮ່ວມກັບຊຸມຊົນຄຣິດຕຽນ.

ສຳລັບການພົບປະໃນທຸກໆຄັ້ງພວກເຮົາຈະໃຊ້ຮູບແບບທີ່ເອີ້ນວ່າ ສາມສ່ວນ (໓/໓) ເພື່ອພັດທະນາມິດຕະພາບໃຫ້ແໜ້ນແຟ້ນຂຶ້ນ. ຮູບແບບ ໓/໓ ເປັນໂຄງສ້າງທີ່ໃຊ້ງານໄດ້ຈິງ ເພື່ອຄວາມສະດວກ ແລະ ການເຮັດກິດຈະກຳຕ່າງໆໃນການພົບປະແຕ່ລະຄັ້ງ. ຊ່ວຍໃຫ້ເກີດຄວາມຕັ້ງໃຈ, ການສົ່ງເສີມ ແລະ ການເຕີບໃຫຍ່. ຮູບແບບນີ້ປະກອບດ້ວຍ ໓ ສ່ວນຄື: ແນມຄືນຫຼັງ, ແນມຂຶ້ນເທິງ ແລະ ແນມໄປທາງໜ້າ.

ໝາຍເຫດ: *ພິຈາລະນາເຖິງພຣະເຢຊູ* ໄດ້ຖືກອອກແບບມາເພື່ອໃຫ້ເປັນແມ່ແບບທີ່ຈະຊ່ວຍໃຫ້ທ່ານເຮັດສຳເລັດຕາມການຊົງເອີ້ນຂອງພຣະເຈົ້າ. **ໃຫ້ທ່ານມີອິດສະຫຼະໃນການປັບວິທີເຫຼົ່ານີ້ ເພື່ອໃຫ້ສອດຄ່ອງກັບຮີດຄອງປະເພນີ!**

# ຮູບແບບສາມ-ສ່ວນສາມ

**ຂະບວນການຝຶກອົບຮົມການເປັນສາວົກ**

## ແນມຄືນຫຼັງ

- **ການຫ່ວງໃຍ:** ໃຫ້ແບ່ງປັນວ່າທ່ານເປັນແນວໃດ. ແບ່ງປັນເລື່ອງລາວໃນຊີວິດ ແລະ ພູມຫຼັງ.
- **ການນະມັດສະການ:** ຮ້ອງເພງນະມັດສະການ ແລະ ອະທິຖານຮ່ວມກັນ.
- **ສະເຫຼີມສະຫຼອງຄວາມສັດຊື່:** ໃຫ້ແບ່ງປັນສິ່ງທີ່ທ່ານກຳລັງຮຽນ ວ່າທ່ານຈະເອົາໄປນຳໃຊ້ແນວໃດ.
- **ຊອກຫາວິໄສທັດ:** ແບ່ງປັນວ່າພຣະເຢຊູປ່ຽນແປງຊີວິດຂອງທ່ານແນວໃດ. ໃຫ້ໜູນໃຈເຊິ່ງກັນ ແລະ ກັນ.

## ແນມຂຶ້ນເທິງ

- **ສະແດງໃຫ້ເຫັນ:** ເບິ່ງແຕ່ລະຕອນຊ້ຳຄືນອີກເທື່ອໜຶ່ງ. ເພື່ອຮຽນຮູ້ເລື່ອງໃໝ່ໆເລື່ອງຂອງພຣະເຢຊູ.
- **ການບອກເລົ່າ:** ຂໍໃຫ້ບາງຄົນໄດ້ເວົ້າເຖິງເລື່ອງລາວໃນຕອນນັ້ນດ້ວຍຄຳເວົ້າຂອງຕົນເອງ.
- **ຈົບສົມບູນ:** ເຊີນຊວນຄົນອື່ນໆມາຕື່ມຊ່ອງວ່າງໃນເລື່ອງນັ້ນ.
- **ສົນທະນາ:** ສົນທະນາແລກປ່ຽນຄຳຖາມຮ່ວມກັນຕາມໄລຍະເວລາທີ່ກຳໜົດ.

## ແນມໄປທາງໜ້າ

- **ນຳໄປໃຊ້:** ກຳໜົດວ່າທ່ານຈະນຳເອົາໄປໃຊ້ແນວໃດ.
- **ບົດຝຶກຫັດ:** ເລົ່າເລື່ອງໃຫ້ກັນ ແລະ ກັນຟັງ.
- **ແບ່ງປັນ:** ສົນທະນາກັນວ່າແມ່ນໃຜທີ່ທ່ານຈະເລົ່າເລື່ອງນີ້ໃຫ້ລາວຟັງ.
- **ອະທິຖານ:** ຂອບຄຸນພຣະເຈົ້າສຳລັບສິ່ງທີ່ພວກເຮົາໄດ້ຮຽນຮູ້. ອະທິຖານເພື່ອກັນ ແລະ ອະທິຖານເພື່ອຊຸມຊົນອື່ນໆດ້ວຍ.

# ຂັ້ນຕອນທີ ໔

# ໐໔

## ກ້າວສູ່ຂັ້ນຕອນຕໍ່ໄປ

ບົດຮຽນສຸດທ້າຍຂອງ *ພິຈາລະນາເຖິງພຣະເຢຊູ* ຈະເວົ້າເຖິງການໃຊ້ຊີວິດຂອງຄຣິສຕຽນ. ໃນຕອນນີ້, ມາລີໄດ້ທົບທວນເຖິງການຊົງເອີ້ນ ແລະ ລາຄາຂອງການຕິດຕາມພຣະເຢຊູ. ມັນຄືເລື່ອງທີ່ສຳຄັນໃນການຊີ້ນຳຜູ້ເຂົ້າຮ່ວມໃນກຸ່ມຂອງທ່ານເພື່ອພວກເຂົາຈະກ້າວເຂົ້າສູ່ຂັ້ນຕໍ່ໄປ ຖ້າຫາກພວກເຂົາມີຄວາມພ້ອມແລ້ວ. **ສິ່ງນີ້ອາດຈະເປັນໂອກາດທີ່ດີເພື່ອທ້າທາຍຄົນໜຶ່ງ ຫຼື ຫຼາຍຄົນໃນກຸ່ມຂອງທ່ານ ເພື່ອພວກເຂົາຈະມີກຸ່ມເປັນຂອງໂຕເອງ ແລະ ແບ່ງປັນສິ່ງທີ່ພວກເຂົາໄດ້ຄົ້ນພົບກັບຄົນອື່ນໆ.** ຖ້າກຸ່ມຂອງທ່ານຕ້ອງການຢາກສືບຕໍ່ພົບປະນຳກັນອີກ, ພວກເຮົາແນະນຳໃຫ້ປ່ຽນໄປສຶກສາກັບກຸ່ມໃຫມ່ຢ່າງເຊັ່ນ: *Rivka* ຫຼື *Knowing Jesus.* ທ່ານສາມາດຊອກຂໍ້ມູນເພີ່ມເຕີມກ່ຽວກັບການສຶກສາເຫຼົ່ານີ້ຈາກທາງດ້ານລຸ່ມ:

Rivka *ເພຈຂໍ້ມູນ:*
www.jesusfilm.org/partners/resources/strategies/women/gather-and-grow/

*ການຮູ້ຈັກພຣະເຢຊູ* ເພຈຂໍ້ມູນ:
www.jesusfilm.org/partners/resources/strategies/knowing-jesus/

*ການຮູ້ຈັກພຣະເຢຊູ* ວິດີໂອພິເສດ:
www.youtube.com/watch?v=MkYpNK໕OvKk

# ຄູ່ມືອ້າງອີງສະບັບຫຍໍ້ສຳລັບຜູ້ນຳ

## ວິທີຜ່ານ ການຮຽນໃນແຕ່ລະຕອນ

*Magdalena* ແບ່ງອອກເປັນຫຼາຍຕອນເພື່ອໃຫ້ສຶກສາຊ່ວງເວລາຕ່າງໆໃນຊີວິດຂອງມາລີ ທີ່ນາງໄດ້ເປັນພະຍານເຫັນເຖິງ ຣິດອຳນາດຂອງພຣະເຢຊູ ທີ່ເອົາຊະນະຄວາມເສື່ອມໂຊມໃນສະພາບຂອງມະນຸດໄດ້. ວິທີທີ່ດີທີ່ສຸດໃນການສຶກສາຄົ້ນຄວ້າ ຂອງທ່ານແມ່ນການດຳເນີນການແຕ່ລະສ່ວນ ຕາມຮູບແບບທີ່ກຳນົດ.

ບໍ່ຈຳເປັນຈະຕ້ອງຖາມ ຄຳຖາມທັງໝົດໃນແຕ່ລະອາທິດ. ຈຸດປະສົງກໍຄືໃຫ້ສະມາຊິກພາຍໃນກຸ່ມສົນທະນາກັນວ່າໃນ ແຕ່ລະຕອນໄດ້ເປີດເຜີຍຫຍັງແດ່ທີ່ກ່ຽວຂ້ອງວ່າພຣະເຢຊູແມ່ນໃຜ ແລະ ການປ່ຽນແປງຂອງມາລີ. ນອກຈາກນີ້ມັນຄື ຄວາມຮັບຜິດຊອບຂອງທ່ານໃນຖານະຜູ້ສະໜັບສະໜູນເພື່ອສ້າງສະພາບແວດລ້ອມທີ່ປອດໄພໃຫ້ກັບກຸ່ມຂອງທ່ານ. ໃນການປະຕິບັດແບບນີ້. ບົດບາດຂອງທ່ານຄືຜູ້ຟັງ ແລະ ຜູ້ຊີ້ແນະ. ເພື່ອຕັ້ງໃຈໃຫ້ເປັນກຸ່ມທີ່ສົນທະນາກັນບໍ່ແມ່ນເພື່ອເທດ ສະໜາໃດໆ.

ໃນການເຂົ້າເຖິງວີດີໂອ. ໃຫ້ທ່ານເຂົ້າໄປໃນແອັບ Jesus Film Project ແລ້ວໃຊ້ຊ່ອງຄົ້ນຫາເພື່ອຊອກແຕ່ລະຕອນດ້ວຍ ຊື່ທີ່ເຮັດເປັນເຄື່ອງໝາຍໂຕອຽງທາງລຸ່ມ ຫຼື ຊອກໃນເວັບໄຊທ໌ Jesus Film Project ໂດຍການໄປທີ່ jesusfilm.org/watch.

## ນີ້ຄືແຕ່ລະຕອນຂອງໜັງ *Magdalena* ໃຫ້ທ່ານໃຊ້ເຂົ້າໃນການສຶກສາ

**ບົດຮຽນທີ ໑** ແມ່ຍິງແຕ່ລະຄົນໄດ້ເຫັນ ແລະ ໄດ້ຮູ້ (ພາກສ່ວນ: *ມາຣີ ມັກດາລາໄປຫາຣີ ເບກາຢູ່ເຮືອນຂອງນາງ*).

**ບົດຮຽນທີ ໒** ພຣະເຢຊູ: ຫຼາຍກວ່າຄຳທຳນວາຍ (ພາກສ່ວນ: *ແຈ້ງຂ່າວເຖິງມາລີ*).

**ບົດຮຽນທີ ໓** ປົດປ່ອຍຈາກການເປັນທາດ (ພາກສ່ວນ: *ມາລີ ມັກດາລາ ເປັນອິດສະຫຼະຈາກມານຊາຕານ*).

**ບົດຮຽນທີ ໔** ຄວາມເມດຕາຂອງພຣະເຢຊູ (ພາກສ່ວນ: *ພຣະເຢຊູຊົງເຮັດໃຫ້ລູກຊາຍຂອງຍິງໝ້າຍຟື້ນຄືນ*).

**ບົດຮຽນທີ ໕** ຄວາມຂັດແຍ້ງ ແລະ ອັກຄະຕິ (ພາກສ່ວນ: *ຍິງຜູ້ຢູ່ທີ່ນໍ້າສ້າງ*).

**ບົດຮຽນທີ ໖** ການຮັກສາ ແລະ ການຟື້ນຄືນໃໝ່ (ພາກສ່ວນ: *ຍິງສາວຜູ້ມີພະຍາດເລືອດຕົກ*).

**ບົດຮຽນທີ ໗** ຄວາມອັບອາຍ ແລະ ກຽດຕິຍົດ (ພາກສ່ວນ: *ການອະໄພໃຫ້ກັບຍິງທີ່ຫຼິ້ນຊູ້*).

**ບົດຮຽນທີ ໘** ການສິ້ນພະຊົນຂອງພຣະເຢຊູ ແລະ ການຄືນພຣະຊົນ (ພາກສ່ວນ: *ມັກດາລາອະທິບາຍເຖິງການສິ້ນພະຊົນ ແລະ ການຄື ນພຣະຊົນຂອງພຣະເຢຊູ*).

**ບົດຮຽນທີ ໙** ການຮູ້ຈັກພຣະເຢຊູ ແລະ ການອະໄພຂອງພຣະອົງ (ພາກສ່ວນ: *ຄວາມເຊື່ອຂອງເຣຟກ້າ*).

**ບົດຮຽນທີ ໑໐** ໃຊ້ຊີວິດຮ່ວມກັບພຣະເຢຊູ (ພາກສ່ວນ: *ການໃຊ້ຊີວິດແບບຄຣິສຕຽນ*).

***ພວກເຮົາອະທິຖານຂໍພຣະເຈົ້າອວຍພອນທ່ານ ດັ່ງທີ່ທ່ານວາງໃຈໃຫ້ພຣະອົງໃຊ້ທ່ານເພື່ອຂະຫຍາຍ ຣາຊອານາຈັກຂອງພຣະອົງ.***

# ບົດຮຽນທີ ໑ ແມ່ຍິງແຕ່ລະຄົນໄດ້ເຫັນ ແລະ ໄດ້ຮູ້

## ມາຣີ ມັກດາລາ ໄປຫາຣິເບກາຢູ່ເຮືອນຂອງນາງ (ພສສ ໑໓໙)

ແນມຄືນຫຼັງ

### ການຫ່ວງໃຍ

- ແບ່ງປັນວ່າທ່ານເປັນແນວໃດ.
- ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ

- ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່

- ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ

- ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນ ຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ໃນຖິ່ນທຸລະກັນດານທີ່ກວ້າງໃຫຍ່, ຫລົງທາງ, ໂດ່ດດ່ຽວ ແລະ ຖືກປະຕິເສດ, ພຣະເຈົ້າໄດ້ພົບກັບທາດຍິງຊື່ນາງຮາກາ. ພຣະຄຳພີກ່າວວ່າ, ນາງຮາກາຈຶ່ງຖາມຕົນເອງວ່າ “ຂ້ອຍໄດ້ເຫັນພຣະເຈົ້າ ແລະ ມີຊີວິດຢູ່ເພື່ອເວົ້າເຖິງເລື່ອງພວກນີ້ແທ້ບໍ?” ດັ່ງນັ້ນນາງຈຶ່ງເອີ້ນພຣະເຈົ້າຢາເວຜູ້ທີ່ໄດ້ກ່າວແກ່ນາງວ່າ “ພຣະເຈົ້າຜູ້ເຫັນໄດ້” ດ້ວຍເຫດນີ້ນໍ້າສ້າງທີ່ຢູ່ເມືອງກາເດັດ ແລະ ເບເຣັດຈຶ່ງມີຊື່ວ່າ “ນໍ້າສ້າງຂອງພຣະເຈົ້າຜູ້ເຫັນຂ້ອຍ” (ປຖມ ໑໖:໑໓-໑໔). ໃນມື້ນີ້ພວກເຮົາເລີ່ມຕົ້ນການເດີນທາງຂອງພວກເຮົາດ້ວຍກັນເພື່ອຮຽນຮູ້ເລື່ອງລາວຂອງພຣະເຈົ້າ ຜູ້ຊົງເຫັນ ແລະ ຮູ້ຈັກພວກເຮົາທຸກໆຄົນຢ່າງແທ້ຈິງ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ການສົນທະນາໃນກຸ່ມ. ໝາຍເຫດ: ບໍ່ຈຳເປັນທີ່ຈະຕ້ອງຕອບທຸກໆຄຳຖາມ.

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງ? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ຍ້ອນຫຍັງເຈົ້າຈຶ່ງຄິດວ່າ ຣິເບກາເດົາວ່າພຣະເຈົ້າຮັກ ແລະ ຮູ້ຈັກໂຕນາງ?*
*໓. ທຸກມື້ນີ້ມີຫຼາຍໆຄົນເວົ້າເຖິງພຣະເຈົ້າ. ພວກເຮົາຈະຮູ້ໄດ້ຢ່າງໃດວ່າພຣະເຈົ້າຄິດ ແລະ ຮູ້ສຶກກ່ຽວກັບພວກເຮົາແທ້ໆ?*
*໔. ອ່ານພຣະຄຳ ພສສ ໑໓໙:໑-໑໘. ຄຳທີ່ຜູ້ທຳນວາຍເດວິດ ໄດ້ເວົ້າໃນຂໍ້ຄວາມຕອນນີ້ວ່າ ພຣະເຈົ້າຊົງຮູ້ຈັກເຮົາດີສໍາໃດ?*

ໃຊ້ QR ລະຫັດນີ້ເພື່ອເບິ່ງ ສ່ວນນີ້ໃນພາສາຂອງທ່ານບົນ ອຸປະກອນສະມາດຂອງທ່ານ.

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ເຈົ້າຮູ້ສຶກແນວໃດທີ່ໄດ້ຮູ້ວ່າພຣະເຈົ້າເຫັນ ແລະ ເຂົ້າໃຈທຸກໆຢ່າງກ່ຽວກັບເຈົ້າ?*
*໖. ດາວິດຂຽນວ່າພຣະເຈົ້າຮູ້ຈັກທຸກຢ່າງທີ່ເຮົາເປັນ, ພຣະອົງຍັງສັດຊື່ໃນຄວາມຮັກ ແລະ ນຳທາງໃຫ້ກັບເຮົາ, ແລະ ກໍຊົງຢູ່ກັບເຮົາຕະຫຼອດມາ. ຍ້ອນຫຍັງເຈົ້າຈຶ່ງຄິດວ່າບາງເທື່ອພວກເຮົາກໍຫຼົ້ມເຫຼວໃນການເຊື່ອວາງໃຈໃນເລື່ອງນີ້?*

### ບົດສະຫຼຸບ

ໃຫ້ໄຕ່ຕອງເຖິງຄວາມໝາຍຂອງການເປັນຜູ້ທີ່ຖືກຮັບຮູ້ ແລະ ຖືກຮັກໂດຍພຣະຜູ້ສ້າງຂອງທ່ານ. ຖ້າຫາກວ່າທຸກໆສ່ວນຂອງທ່ານໄດ້ຖືກພົບເຫັນ, ບໍ່ວ່າຈະຖືກປົກປິດ ຫຼື ໃຫ້ມີຄຸນຄ່າ ພຣະເຢຊູໄດ້ສະເໜີການອະໄພໂທດບາບສຳລັບຄວາມຫຼົ້ມເຫຼວຂອງທ່ານ ແລະ ມີເປົ້າໝາຍສຳລັບຊີວິດຂອງທ່ານໄວ້ໝົດແລ້ວ. ພຣະອົງຊົງສັນຍາວ່າຊີວິດນິຣັນດອນ ແລະ ການຊົງສະຖິດຈະມີຢູ່ໃນຜູ້ທີ່ເຂົ້າມາຫາພຣະອົງ. ທ່ານຄືຜູ້ທີ່ຖືກສ້າງຂຶ້ນມາດ້ວຍພຣະລັກສະນະຂອງພຣະເຈົ້າ ແລະ ປຽບສະເໝືອນກັບພຣະອົງ. ທ່ານມີກຽດສັກສີ ແລະ ມີຄຸນຄ່າ ເພາະທ່ານຖືກສ້າງຂຶ້ນມາດ້ວຍພຣະລັກສະນະຂອງພຣະອົງ (ປຖມ ໑:໒໖-໒໗). ພິຈາລະນາເຖິງພຣະເຢຊູ.

---

ແນມໄປທາງໜ້າ

### ນຳໄປໃຊ້

- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ

- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ

- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ

- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໔ ພຣະເຢຊູ: ເປັນຫຼາຍກວ່າຜູ້ທຳນວາຍ

## ແຈ້ງຂ່າວເຖິງມາລີ (ລູກາ ໑:໔໖-໓໗)

ແນມຄືນຫຼັງ

### ການຫ່ວງໃຍ

- ແບ່ງປັນວ່າທ່ານເປັນແນວໃດ.
- ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ

- ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່

- ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ

- ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນ ຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ເມື່ອຫຼາຍຮ້ອຍປີກ່ອນພຣະເຢຊູກຳເນີດ, ຜູ້ທຳນວາຍເອຊາຢາທຳນວາຍໄວ້ວ່າອິດສະຣາເອນຈະໄດ້ຮັບໝາຍສຳຄັນ: ຍິງພົມມະຈາລີຈະຕັ້ງຄັນບຸດຊາຍ (ເອຊາຢາ ໗:໑໔). ພຣະບຸດນີ້ຊື່ວ່າ ເຢຊູ, ພຣະອົງຊົງຖ່ອມຕົວລົງຫຼາຍ ແລະ ເປັນຜູ້ທີ່ຖ່ອມຕົວຫຼາຍທີ່ສຸດເໜືອສິ່ງທັງປວງ: ແອນ້ອຍ. ພຣະອົງຊົງປະເຊີນກັບຄວາມເປັນມະນຸດຢ່າງເຕັມຮູບແບບ. ສະແດງໃຫ້ເຫັນວ່າພຣະອົງບໍ່ແມ່ນພຽງພຣະເຈົ້າທີ່ສົມບູນ. ພຣະອົງຍິນດີປະເຊີນກັບຄວາມເຈັບປວດ, ການເຈັບປ່ວຍ, ຄວາມຫິວກະຫາຍ, ຄວາມເສົ້າ ແລະ ການບາດເຈັບ. ເພື່ອຟື້ນຟູຄວາມສຳພັນກັບເຮົາ ແລະ ເມື່ອພຣະເຢຊູປະສູດ. ພຣະອົງປະສູດຈາກຍິງພົມມະຈາລີ: ຄືມາລີຍິງພົມມະຈາລີນັ້ນເອງ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໔: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

ໃຊ້ QR ລະຫັດນີ້ເພື່ອເບິ່ງ ສ່ວນນີ້ໃນພາສາຂອງທ່ານບົນ ອຸປະກອນສະມາດຂອງທ່ານ.

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງ? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໔. ເຈົ້າຄິດວ່າມາລີຮູ້ສຶກແນວໃດເມື່ອນາງໄດ້ຍິນຂໍ້ຄວາມຈາກເທວະດາ? ເຈົ້າຈະຮູ້ສຶກແນວໃດຫາກເຈົ້າໄດ້ຮັບຂ່າວເຊັ່ນດຽວກັນ?*
*໓.ເທວະດາກ່າວວ່າ, ດ້ວຍວ່າ ບໍ່ມີສິ່ງໃດທີ່ພຣະເຈົ້າເຮັດບໍ່ໄດ້. ສິ່ງໃດທີ່ເປັນໄປບໍ່ໄດ້ສຳລັບເຈົ້າໃນຕອນນີ້?*
*໔. ຄວາມໝາຍທີ່ເທວະດາໄດ້ກ່າວວ່າບຸດຊາຍຜູ້ນັ້ນຈະຖືກເອີ້ນວ່າ "ບຸດຂອງພຣະເຈົ້າ" ແມ່ນຫຍັງ?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ຍ້ອນຫຍັງເຈົ້າຈຶ່ງຄິດວ່າມັນເປັນເລື່ອງສຳຄັນທີ່ພຣະເຢຊູໄດ້ເກີດຈາກຍິງພົມມະຈາລີ?*

### ບົດສະຫຼຸບ

ໄຕ່ຕອງເຖິງທຳມະຊາດທີ່ໜ້າອັດສະຈັນຂອງການກຳເນີດພຣະເຢຊູ. ພຣະອົງຊົງເປັນພຣະເຈົ້າ ແລະ ມະນຸດ.ພຣະອົງຊົງເປັນຜູ້ຊົງສ້າງໂລກ ແລະ ມະນຸດ. ພຣະອົງຊົງເປັນຜູ້ທີ່ເຮົາສາມາດເຂົ້າໃຈ ແລະ ວາງໃຈໄດ້ໃນຖານະຜູ້ໄຖ່ບາບ. ພິຈາລະນາເຖິງພຣະເຢຊູ.

---

ແນມໄປທາງໜ້າ

### ນຳໄປໃຊ້

- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ

- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ

- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ

- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໓ ປົດປ່ອຍຈາກການເປັນທາດ

## ມາລີ ມັກດາລາ ເປັນອິດສະຫຼະຈາກມານຊາຕານ (ລູກາ ໘:໑-໒)

ແນມຄືນຫຼັງ

### ການຫ່ວງໃຍ

- ແບ່ງປັນວ່າທ່ານເປັນແນວໃດ.
- ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ

- ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່

- ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ

- ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນ ຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ການຄ້າມະນຸດ, ຢາເສບຕິດ, ການຫຼົບໜີ. ການຕົກເປັນທາດມີຫຼາກຫຼາຍຮູບແບບໃນໂລກປັດຈຸບັນຂອງພວກເຮົາ. ພຣະຄຳພີສອນພວກເຮົາວ່າມະນຸດໄດ້ຕົກເປັນທາດຂອງຄວາມບາບ, ແຕ່ພຣະຄຳຍັງສອນອີກວ່າອິດສະຫຼະສາມາດພົບໄດ້. ໃນເລື່ອງນີ້ໃຫ້ເບິ່ງມາລີທີ່ຕົກເປັນທາດ ແລະ ຖືກຄອບຄອງໂດຍມານຊາຕານ, ໄດ້ພົບກັບພຣະເຢຊູຜູ້ຊົງມີຣິດອຳນາດທີ່ຍິ່ງໃຫຍ່.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງ? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ການຕົກເປັນທາດຂອງມາລີສົ່ງຜົນແນວໃດກັບຕົວຕົນຂອງນາງ ແລະ ຕໍ່ກັບຊຸມຊົນ?*
*໓. ພຣະເຢຊູໄດ້ເປີດເຜີຍພຣະອົງເອງກັບນາງມາລີແນວໃດ?*
*໔. ມາລີໄດ້ປ່ຽນໄປຢ່າງໃດຫຼັງຈາກທີ່ໄດ້ຮັບອິດສະຫຼະຈາກພຣະເຢຊູ?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ຍ້ອນຫຍັງມັນຈຶ່ງເປັນໝາຍສຳຄັນທີ່ມານຮູ້ວ່າພຣະເຢຊູແມ່ນໃຜ ແລະ ເອີ້ນພຣະອົງວ່າ "ຜູ້ບໍລິສຸດຂອງພຣະເຈົ້າ"*
*໖. ເຈົ້າຄິດວ່າຜູ້ເຝົ້າເບິ່ງຈະຄິດແນວໃດກັບພຣະເຢຊູ ທີ່ເຫັນພຣະອົງປົດປ່ອຍນາງມາລີໃຫ້ເປັນອິດສະຫຼະ?*
*໗. ໃຫ້ເຈົ້າຈິນຕະນາການວ່າເຈົ້າເປັນມາລີໃນເລື່ອງນີ້. ເຈົ້າຈະຮູ້ສຶກຢ່າງໃດຕໍ່ກັບພຣະເຢຊູ?*

ໃຊ້ QR ລະຫັດນີ້ເພື່ອເບິ່ງສ່ວນນີ້ໃນພາສາຂອງທ່ານບົນອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ

ໄຕ່ຕອງເຖິງປະສົບການທີ່ມາລີໄດ້ເປັນອິດສະຫຼະໃນເລື່ອງນີ້. ໃຫ້ຈື່ຄວາມຊັດເຈນທາງສາຍຕາຂອງນາງຫຼັງຈາກໄດ້ຖືກປົດປ່ອຍໃຫ້ເປັນອິດສະຫຼະ, ຄວາມກະຕັນຍູທີ່ນາງສະແດງອອກມາ ແລະ ການປ່ຽນແປງຊີວິດທັງໝົດຂອງນາງ. ທ່ານເຊື່ອບໍ່ວ່ານີ້ຄືຍິງຄົນດຽວກັນໃນຕອນເລີ່ມຕົ້ນຂອງເລື່ອງ? ຈິນຕະນາການເຖິງການຮຽກຮ້ອງຂອງພຣະເຢຊູທີ່ເຮັດໃຫ້ທ່ານເປັນອິດສະຫຼະຈາກການຕົກເປັນທາດ ແລະ ການຂົ່ມເຫັງ. ທ່ານປາຖະໜາທີ່ຈະຖືກສ້າງຂຶ້ນໃໝ່ແບບໃດ? ອະນຸຍາດໃຫ້ພຣະອົງຮັບເອົາພາລະອັນໜັກໜ່ວງຂອງທ່ານອອກໄປຈາກບ່າ ແລະ ຕິດຕາມພຣະອົງໄປ. ພິຈາລະນາເຖິງພຣະເຢຊູ.

---

ແນມໄປທາງໜ້າ

### ນຳໄປໃຊ້

- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ

- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ

- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ

- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໔ ຄວາມເມດຕາຂອງພຣະເຢຊູ

## ພຣະເຢຊູຊົງເຮັດໃຫ້ລູກຊາຍຂອງຍິງໝ້າຍຟື້ນຄືນ (ລູກາ ໗:໑໑-໑໗)

แนมຄືນຫຼັງ

### ການຫ່ວງໃຍ
• ແບ່ງປັນວ່າທ່ານເປັນແນວໃດ.
• ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ
• ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່
• ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ
• ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນ ຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ຄວາມໂສກເສົ້າໄດ້ຖືກກຳນົດເປັນຄວາມໂສກເສົ້າທີ່ເລິກຢູ່ພາຍໃນ, ໂດຍສະເພາະຫາກມີໃຜບາງຄົນເສຍຊີວິດ. ໃນເລື່ອງຕອນນີ້ ແມ່ໝ້າຍໄດ້ໂສກເສົ້າເສຍໃຈເພາະລູກຂອງນາງໄດ້ຕາຍ. ມາລີສັງເກດເບິ່ງພຣະເຢຊູຍ່າງໄປຫາຍິງຄົນນັ້ນ ແລະ ພຣະອົງຊົງເຫັນເຖິງຄວາມຕ້ອງການໃນຈິດໃຈຂອງນາງ. ໃນຕົວຢ່າງນີ້, ພຣະເຢຊູເລືອກທີ່ຈະຮັກສາລູກຄົນດຽວຂອງນາງ-ມອບຂອງຂວັນທີ່ມີຄ່າທີ່ສຸດໃຫ້ຄືນກັບນາງ. ພຣະອົງອາດຈະບໍ່ໄດ້ເລືອກເຮັດໃນສິ່ງນີ້ຕະຫຼອດ, ແຕ່ພວກເຮົາສາມາດເພິ່ງພາພຣະອົງຜູ້ຊົງຢູ່ໃນປັດຈຸບັນໃນທຸກສະຖານະການ, ເຖິງແມ່ນວ່າມັນຈະເປັນຈະຄວາມໂສກເສົ້າທີ່ເຈັບປວດທີ່ສຸດ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງນີ້? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ພຣະເຢຊູໄດ້ຢຸດເຮັດສິ່ງທີ່ພຣະອົງກຳລັງເຮັດຢູ່ເພື່ອເຂົ້າໄປຫາແມ່ໝ້າຍ. ສິ່ງນີ້ໄດ້ເປີດເຜີຍຫົວໃຈຂອງພຣະອົງຢ່າງໃດ?*
*໓. ມີການກ່າວແນວໃດກ່ຽວກັບພຣະເຢຊູທີ່ສາມາດຟື້ນຄືນຈາກຄວາມຕາຍໄດ້?*
*໔. ເຈົ້າເຄີຍຢູ່ໃນສະຖານະການທີ່ສິ້ນຫວັງບໍ່?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ຜູ້ຄົນໃນທີ່ນັ້ນມີທ່າທີຕອບສະໜອງແນວໃດເມື່ອພຣະເຢຊູເຮັດໃຫ້ເດັກນ້ອງຜູ້ຊາຍຄົນນັ້ນຟື້ນຄືນຈາກຄວາມຕາຍ? ແມ່ໝ້າຍມີທ່າທີຕອບສະໜອງແນວໃດ?*
*໖. ມີບາງສິ່ງ ຫຼື ບາງຄົນທີ່ເຈົ້າກຳລັງຮູ້ສຶກໂສກເສົ້າກັບລາວຢູ່ໃນຕອນນີ້ບໍ່? ຖ້າມີ ເຈົ້າຈະວາງໃຈໃຫ້ພຣະເຈົ້າຊ່ວຍເພື່ອໃຫ້ເຈົ້າຜ່ານຄວາມໂສກເສົ້ານີ້ໄປບໍ່?*

ໃຊ້ QR ລະຫັດນີ້ເພື່ອເບິ່ງ ສ່ວນນີ້ໃນພາສາຂອງທ່ານບົນ ອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ
ມີພຽງພຣະເຈົ້າຜູ້ດຽວທີ່ຊົງປະທານລົມຫາຍໃຈໃຫ້ກັບຜູ້ທີ່ຕາຍໄປແລ້ວ. ໄຕ່ຕອງເຖິງຄວາມຈິງທີ່ວ່າພຣະເຢຊູຄືພຣະເຈົ້າ. ພຣະອົງຊົງສາມາດຟື້ນຄືນ ແລະ ເຮັດໃຫ້ສິ່ງທີ່ຕາຍໄປແລ້ວກັບມາມີຊີວິດອີກຄັ້ງໄດ້, ບໍ່ແມ່ນພຽງຊາຍຜູ້ນີ້ ແຕ່ມີເຖິງ ໓ ຄັ້ງໃນໄລຍະທີ່ຢູ່ໃນຊ່ວງພັນທະກິດຂອງພຣະອົງ. ພຣະອົງບໍ່ພຽງແຕ່ມີຣິດອຳນາດທີ່ເຕັມລົ້ນເທົ່ານັ້ນ ແຕ່ພຣະອົງຍັງຊົງມີຄວາມເມດຕາປານີ, ສຸພາບອ່ອນຫວານ ແລະ ເປັນຜູ້ຊົງປອບໂຍນ. ພິຈາລະນາເຖິງພຣະເຢຊູ.

---

ແນມໄປທາງໜ້າ

### ນຳໄປໃຊ້
- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ
- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ
- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ
- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໕ ຄວາມຂັດແຍ້ງ ແລະ ອັກຄະຕິ
## ຍິງຜູ້ຢູ່ທີ່ນໍ້າສ້າງ (ໂຢຮັນ ໔:໑-໔໒)

ແນມຄືນຫຼັງ

### ການຫ່ວງໃຍ
• ແບ່ງປັນວ່າທ່ານເປັນແນວໃດ.
• ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ
• ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່
• ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ
• ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນ ຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ທ່ານເຄີຍຖືກຕັດສິນ ຫຼື ເຄີຍຖືກດູຖູກໂດຍໃຜບາງຄົນບໍ? ໃນເລື່ອງນີ້, ມາລີເຝົ້າເບິ່ງຍິງສາວຊາມາເລຍທີ່ຖືກຂັບໄລ່ຖືເຄື່ອງໃຊ້ເພື່ອເດີນທາງໄປທີ່ບໍ່ນໍ້າສ້າງໃນແຕ່ລະມື້. ນາງຫວັງທີ່ຈະບໍ່ແລ່ນເຂົ້າໄປພົບກັບຜູ້ໃດ. ນາງຍ່າງຄົນດຽວໃນມື້ທີ່ອາກາດຮ້ອນຫຼາຍ. ເມື່ອນາງມາຮອດ, ນາງກໍຜິດຫວັງເພາະເຫັນຊາຍຄົນໜຶ່ງ. ນາງຮູ້ວ່າຄົນນັ້ນບໍ່ແມ່ນຊາຍທຳມະດາແຕ່ເປັນຄົນຢິວ. ຊາວຊາມາເລຍແມ່ນລູກເຄິ່ງລະຫວ່າງ "ຄົນຢິວ ກັບ ຄົນທີ່ບໍ່ແມ່ນຄົນຢິວ" ຄືກຸ່ມຄົນທີ່ມີສາສະໜາປະສົມປະສານ ທາງຄວາມຄິດ ແລະ ຄວາມເຊື່ອ. ຊາວຢິວ ແລະ ຊາວຊາມາເລຍກຽດຊັງກັນ ແຕ່ກຸ່ມຄົນທັງສອງກໍຄາດຫວັງການກັບມາຂອງພຣະເມສີອາ ຫຼື ພຣະຜູ້ໄຖ່. ຜູ້ທີ່ຈະຊົງນໍາເອົາການອະໄພມາສູ່ຄວາມບາບຂອງພວກເຂົາ. ຈິນຕະນາການເຖິງຄວາມປະຫຼາດໃຈຂອງຍິງຜູ້ນີ້ເມື່ອມີຊາຍຄົນໜຶ່ງຄື ພຣະເຢຊູ ຜູ້ປະຕິເສດຕໍ່ການໝິ່ນປະມາດທາງວັດທະນະທໍາ ແລະ ຍ່າງເຂົ້າໄປຫານາງ. ໃນຕອນຈົບຂອງເລື່ອງ, ຍິງຊາວຊາມາເລຍທີ່ຖືກຂັບໄລ່ໄດ້ກາຍເປັນຜູ້ທໍາອິດທີ່ພຣະເຢຊູຊົງເປີດເຜີຍວ່າພຣະອົງເປັນພຣະເມຊີອາຢ່າງຊັດເຈນ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄໍາເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄໍາຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງ? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ຍ້ອນຫຍັງມັນຈຶ່ງເປັນເຄື່ອງໝາຍທີ່ສໍາຄັນທີ່ພຣະເຢຊູຮູ້ເຖິງອະດີດທັງໝົດຂອງຍິງຄົນນັ້ນ?*
*໓.ເຈົ້າຄິດວ່າຍິງຄົນນັ້ນຈະຮູ້ສຶກຢ່າງໃດເມື່ອພຣະເຢຊູໄດ້ບອກທຸກຢ່າງກ່ຽວກັບຊີວິດ ແລະ ຄວາມຜິດບາບໃນອະດີດທັງໝົດຂອງນາງ?*
*໔. ເມື່ອສາວົກໄດ້ເຫັນພຣະເຢຊູສົນທະນາກັບຍິງຊາວຊາມາເລຍ, ພວກເຂົາສະແດງທ່າທີ ແລະ ເປີດເຜີຍອັກຄະຕິອອກມາແນວໃດ? ສິ່ງນີ້ໄດ້ກ່າວເຖິງພຣະເຢຊູຢ່າງໃດ?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ເຈົ້າຄິດວ່າພຣະເຢຊູກໍາລັງພະຍາຍາມຈະສອນຫຍັງໃຫ້ກັບຜູ້ຕິດຕາມຂອງພຣະອົງໃນເລື່ອງນີ້?*
*໖. ຍິງຄົນນັ້ນໄດ້ເຮັດຫຍັງເມື່ອພຣະເຢຊູໄດ້ບອກກັບນາງວ່າພຣະອົງຄືພຣະເມຊີອາຕາມພຣະສັນຍາ?*

ໃຊ້ QR ລະຫັດນີ້ເພື່ອເບິ່ງ ສ່ວນນີ້ໃນພາສາຂອງທ່ານບົນ ອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ
ພິຈາລະນາເຖິງຄວາມໝາຍທີ່ພຣະເຢຊູຊົງຮູ້ອະດີດຂອງທ່ານ: ທຸກໆການຕັດສິນໃຈຜິດພາດທີ່ທ່ານເຄີຍເລືອກ, ທຸກໆຊ່ວງເວລາທີ່ໜ້າອັບອາຍ ແລະ ຂາຍໜ້າທັງໝົດຂອງທ່ານ. ຕອນນີ້ໃຫ້ໄຕ່ຕອງເຖິງຄວາມຈິງ ແມ່ນວ່າສິ່ງເຫຼົ່ານັ້ນຈະຖືກເປີດເຜີຍອອກມາ, ພຣະອົງກໍຍັງຊົງເຫັນກຽດ ແລະ ຄຸນຄ່າໃນໂຕທ່ານ ບໍ່ແມ່ນພຽງແຕ່ທ່ານ ແຕ່ລວມເຖິງຄົນທີ່ທ່ານຊົງນໍາດ້ວຍ. ໄຕ່ຕອງເຖິງຄວາມປາຖະໜາຂອງພຣະອົງທີ່ຕ້ອງການໃຫ້ທຸກໆຄົນຮູ້ຈັກ. ພິຈາລະນາເຖິງພຣະເຢຊູ.

---

ແນມໄປທາງໜ້າ

### ນໍາໄປໃຊ້
• ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
• ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ
• ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ
• ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ
• ຂອບຄຸນພຣະເຈົ້າສໍາລັບສິ່ງທີ່ທ່ານໄດ້ຮຽນ.
• ອະທິຖານເພື່ອເຊິ່ງກັນ ແລະ ກັນ.
• ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໖ ການຮັກສາ ແລະ ການຟື້ນຄືນໃໝ່

## ຍິງສາວຜູ້ມີພະຍາດເລືອດຕົກ (ລູກາ ໘:໔໐-໔໘)

ແນມຄືນຫຼັງ

### ການຫ່ວງໃຍ
- ແບ່ງປັນວ່າທ່ານເປັນແນວໃດ.
- ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ
- ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່
- ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ
- ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ທ່ານເຄີຍຮູ້ສຶກໝົດຫວັງໃນການກຳຈັດບາງສິ່ງບໍ່? ບໍ່ວ່າຈະເປັນທາງກາຍະພາບ ຫຼື ບາດແຜທາງອາລົມທີ່ທ່ານພະຍາຍາມເຮັດທຸກວິຖີທາງເພື່ອແກ້ໄຂມັນ. ຫວັງທີ່ຈະໄປໂດຍບໍ່ຖືກສັງເກດເຫັນ.ຍິງທີ່ຢູ່ໃນເລື່ອງນີ້ ນາງເຊື່ອວ່າພຽງແຕ່ສາມາດແຕະເສື້ອຄຸມຂອງພຣະເຢຊູໄດ້, ນາງຈະໄດ້ຮັບການຮັກສາຈາກການເປັນພະຍາດເລືອດຕົກທີ່ນາງຮັກສາມາຫຼາຍປີແຕ່ອາການກັບຊຸດໂຊມລົງ. ພະຍາດເລືອດຕົກເຮັດໃຫ້ນາງກາຍເປັນຄົນນອກສັງຄົມ ແລະ ຖືກກ່າວຫາວ່າເປັນມົນທິນຕໍ່ສາສະໜາຕາມກົດບັນຍັດໃນຊ່ວງເວລານັ້ນ. ທ່າມກາງຊຸມຊົນທີ່ໜາແໜ້ນນັ້ນ ນາງໄດ້ຕັດສິນໃຈແຕະພຣະເຢຊູ ທີ່ມີນາງມາລີ ແລະ ຄົນອື່ນໆຢູ່ໃກ້. ເບິ່ງວ່າເກີດຫຍັງຂຶ້ນ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງນີ້? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ຍ້ອນຫຍັງເຈົ້າຈຶ່ງຄິດວ່າພຣະເຢຊູໃຫ້ນາງສະແດງຕົວຕົນຕໍ່ໜ້າຜູ້ຄົນ?*
*໓. ຍ້ອນຫຍັງການທີ່ພຣະເຢຊູຕອບສະໜອງຕໍ່ຄຳສາລະພາບຂອງນາງຈຶ່ງສຳຄັນ?*
*໔. ຈິນຕະນາການວ່າເຈົ້າຍິງທີ່ຢູ່ໃນເລື່ອງນີ້. ຄວາມຮູ້ສຶກທຳອິດຫຼັງຈາກໄດ້ຮັບການປຽວຢາແລ້ວຄວນຈະຮູ້ສຶກຢ່າງໃດ ແລະ ເຈົ້າຈະຮູ້ສຶກແນວໃດຕໍ່ກັບພຣະເຢຊູ?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ສິ່ງທີ່ພຣະເຢຊູສາມາດເຮັດໄດ້ແຕ່ຄົນອື່ນເຮັດບໍ່ໄດ້ໝາຍຄວາມວ່າແນວໃດ?*
*໖. ເຈົ້າຄິດວ່າຊີວິດຂອງນາງກ່ອນຈະມາພົບພຣະເຢຊູເປັນແບບໃດ?*

ໃຊ້ QR ລະຫັດນີ້ເພື່ອເບິ່ງສ່ວນນີ້ໃນພາສາຂອງທ່ານບົນອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ
ໃນທ່າມກາງຊຸມຊົນທີ່ໜາແໜ້ນ ຍິງຜູ້ນັ້ນຍື່ນມືອອກໄປ ແລະ ແຕະແຄມເສື້ອຂອງພຣະເຢຊູ. ເມື່ອນາງສຳພັດເສື້ອແລ້ວ, ນາງກໍຮູ້ສຶກເຖິງການປົວແປງຄືນໃໝ່ທີ່ຫຼັ່ງໄຫຼມາສູ່ຮ່າງກາຍຂອງນາງ. ນາງໄດ້ຮັບການຮັກສາແລ້ວ! ໃຫ້ຈິນຕະນາການເຖິງຄວາມເຊື່ອ ແລະ ຄວາມກະຕັນຍູທີ່ນາງຕ້ອງຮູ້ສຶກ. ພຣະເຢຊູກ່າວວ່າ "ລູກຍິງເອີຍ, ຄວາມເຊື່ອຂອງເຈົ້າເຮັດໃຫ້ເຈົ້າຫາຍດີແລ້ວ ຈົ່ງໄປເປັນສຸກເທີ້ນ" ໃຫ້ໄຕ່ຕອງເຖິງຄຳຂອງພຣະເຢຊູ. ພຣະເຢຊູໄດ້ກ່າວຫຼັງຈາກທີ່ນາງໄດ້ສາລະພາບຄວາມຜິດບາບ ຕໍ່ໜ້າຊຸມຊົນໜາແໜ້ນທີ່ຕໍ່ວ່ານາງເປັນມົນທິນ. ພຣະເຢຊູເອີ້ນນາງວ່າລູກຍິງ ແລະ ໃຫ້ກຽດຕໍ່ຄວາມເຊື່ອຂອງນາງ.  ພຣະເຢຊູຫ່ວງໃຍຄວາມເຈັບປວດ ແລະ ບາດແຜທີ່ພວກເຮົາຮູ້ສຶກຢູ່. ພຣະອົງເຝົ້າຄອຍທີ່ຈະພົບພວກເຮົາໃນຄວາມເຈັບປວດ ແລະ ຄວາມອັບອາຍນັ້ນ. ພິຈາລະນາເຖິງພຣະເຢຊູ.

---

ແນມໄປທາງໜ້າ

### ນຳໄປໃຊ້
- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ
- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ
- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ
- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໗ ຄວາມອັບອາຍ ແລະ ກຽດຕິຍົດ

## ການອະໄພໃຫ້ກັບຍິງທີ່ຫຼິ້ນຊູ້ (ໂຢຮັນ ໘:໑-໑໑)

ແນມຄືນຫຼັງ

### ການຫ່ວງໃຍ

- ແບ່ງປັນວ່າທ່ານເປັນແນວໃດ.
- ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ

- ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່

- ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ

- ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນຜູ້ຕິດຕາມພຣະເຢຊູ.

ແນມຂຶ້ນເທິງ

ຜູ້ນຳສາສະໜາໃນສະໄໝຂອງພຣະເຢຊູສຸມໃສ່ກົດບັນຍັດ ແລະ ຂໍ້ບັງຄັບຕ່າງໆທີ່ເອີ້ນວ່າ "ກົດບັນຍັດຂອງໂມເຊ". ທຸກຄົນຕ້ອງເຊື່ອຟັງກົດບັນຍັດຢ່າງສົມບູນແບບຈຶ່ງຈະສາມາດມີຄວາມສຳພັນກັບພຣະເຈົ້າໄດ້. ແຕ່ໜ້າເສຍດາຍທີ່ບໍ່ມີໃຜສາມາດປະຕິບັດຕາມກົດບັນຍັດໄດ້ເລີຍ ເພາະພວກເຮົາມີປັນຫາອັນດຽວກັນ: ນັ້ນກໍຄືບາບ. ຄຳວ່າບາບໃນພາສາຮີບບຣູໝາຍຄວາມວ່າ "ຫຼົ້ມເຫຼວ ຫຼື ເປົ້າໝາຍຜິດພາດ". ພາຍໃຕ້ຂໍ້ຮຽກຮ້ອງຂອງກົດບັນຍັດ. ພວກເຮົາທຸກຄົນມີຄວາມຜິດ ແລະ ສົມຄວນຕາຍ. ຖ້າຫາກບໍ່ມີພຣະຜູ້ໄຖ່ໃຫ້ພົ້ນ ພວກເຮົາທຸກຄົນກໍຮອດຈຸດຈົບແລ້ວ. ພໍເມື່ອພຣະເຢຊູໄດ້ລົງມາຍັງໂລກເພື່ອຖວາຍພຣະອົງເອງເປັນຄ່າໄຖ່ໃຫ້ກັບຄວາມບາບຂອງພວກເຮົາ. ໃນເລື່ອງນີ້, ຍິງຜູ້ມີຄວາມຜິດບາບຖືກນຳໄປຫາພຣະເຢຊູ. ເບິ່ງສິ່ງທີ່ເກີດຂຶ້ນ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງນີ້? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ຕາມກົດບັນຍັດແລ້ວ ທັງຊາຍ ແລະ ຍິງທີ່ຖືກຈັບໄດ້ວ່າມີການນອກໃຈກັນຈະຖືກລົງໂທດ ແຕ່ມີພຽງຜູ້ຍິງຄົນດຽວທີ່ຖືກນຳໄປຫາພຣະເຢຊູ. ຍ້ອນຫຍັງເຈົ້າຈຶ່ງວ່າມີພຽງຜູ້ຍິງເທົ່ານັ້ນທີ່ຖືກນຳໄປສູ່ການຕັດສິນ?*
*໓. ຍ້ອນຫຍັງການຕອບສະໜອງຂອງພຣະເຢຊູທັງຕໍ່ພວກຜູ້ນຳສາສະໜາ ແລະ ຍິງຄົນນັ້ນຈຶ່ງສຳຄັນ?*
*໔. ເຈົ້າຄິດວ່າຍິງນັ້ນຈະຮູ້ສຶກຢ່າງໃດທີ່ໄດ້ຍິນພຣະເຢຊູເວົ້າວ່າ "ດີແລ້ວ ເຮົາກໍບໍ່ລົງໂທດເຈົ້າເໝືອນກັນ"?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ຍ້ອນຫຍັງເຈົ້າຈຶ່ງຄິດວ່າພຣະເຢຊູຈຶ່ງຕອບສະໜອງແບບນີ້? ແມ່ນຫຍັງທີ່ເຈົ້າຄິດວ່າພຣະອົງຕ້ອງການໃຫ້ພວກເຂົາເຂົ້າໃຈ?*
*໖. ຖ້າຫາກເຈົ້າຢືນຢູ່ຕຳແໜ່ງຂອງພວກຜູ້ນຳສາສະໜາ, ເຈົ້າຈະມີທ່າທີແນວໃດກັບການຕອບສະໜອງຂອງພຣະເຢຊູ?*

ໃຊ້ QR ລະຫັດນີ້ເພື່ອເບິ່ງສ່ວນນີ້ໃນພາສາຂອງທ່ານບົນອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ

ໄຕ່ຕອງເຖິງວິທີທີ່ພຣະເຢຊູໄດ້ຕອບສະໜອງຕໍ່ກັບຍິງຜູ້ນັ້ນ ແລະ ພວກຜູ້ນຳສາສະໜາ. ພຣະອົງຮູ້ດີວ່າພວກຜູ້ຊາຍບໍ່ໄດ້ພານາງມາຫາພຣະອົງດ້ວຍຄວາມຫ່ວງໃຍນາງ ແຕ່ເຮັດພຽງເພາະຕ້ອງການໃຫ້ນາງອັບອາຍ ແລະ ໃຫ້ພຣະອົງຕິດກັບດັກ. ພຣະອົງເລືອກທີ່ຈະບໍ່ສະໜັບສະໜູນພຶດຕິກຳຂອງນາງ ຫຼື ບໍ່ເຂົ້າຂ້າງພວກຜູ້ນຳສາສະໜາ. ພຣະອົງເຮັດໃຫ້ພວກເຂົາສຳນຶກຜິດຢ່າງສະຫຼຽວສະຫຼາດ. ໃຫ້ພິຈາລະນາເຖິງຫົວໃຈຂອງພຣະເຢຊູ ທີ່ນຳທັງສອງຝ່າຍໄປສູ່ການສຳນຶກຜິດໄດ້ຢ່າງໃດ. ພຣະເຢຊູສາມາດໃຫ້ອະໄພໂທດບາບໄດ້-ຄືສິ່ງທີ່ພຣະເຈົ້າເທົ່ານັ້ນທີ່ສາມາດເຮັດໄດ້-ເພາະພຣະເຢຊູເປັນພຣະເຈົ້າ. ເມື່ອພວກເຮົາເລືອກທີ່ຈະເປັນຜູ້ຕິດຕາມຂອງພຣະເຢຊູ, ພຣະອົງກໍຊົງອະໄພ ແລະ ປະທານຊີວິດໃໝ່ໃຫ້ກັບພວກເຮົາທີ່ມີຢູ່ໃນພຣະອົງ. ພິຈາລະນາເຖິງພຣະເຢຊູ.

ແນມໄປທາງໜ້າ

### ນຳໄປໃຊ້

- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ

- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ

- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ

- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໑໗ ການສິ້ນພະຊົນຂອງພຣະເຢຊູ ແລະ ການຄືນພຣະຊົນ

## ມັກດາລາອະທິບາຍເຖິງການສິ້ນພະຊົນ ແລະ ການຄືນພຣະຊົນຂອງພຣະເຢຊູ (ມັດທາຍ ໒໗-໒໘)

ແນມຄືນຫຼັງ

### ການຫ່ວງໃຍ
- ແບ່ງປັນວ່າທ່ານເປັນແນວໃດ.
- ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ
- ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່
- ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ
- ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ໃນຄືນທີ່ພຣະເຢຊູສິ້ນພຣະຊົນ, ພວກຜູ້ຍິງຟ້າວກັບບ້ານເພື່ອກຽມເຄື່ອງຫອມ ແລະ ນໍ້າມັນເພື່ອໄປດອງພຣະສົບໃນເຊົ້າມື້ຕໍ່ໄປ. ມື້ຕໍ່ມາພວກນາງກໍປະຕິບັດຕາມວັນສະບາໂຕຢ່າງເຄັ່ງຄັດ ແລະ ພັກຜ່ອນດ້ວຍຄວາມຫວັງວ່າຈະກັບໄປຫາພຣະສົບຂອງອົງພຣະຜູ້ເປັນເຈົ້າຂອງພວກເຂົາ. ນໍ້າຕາໄດ້ໄຫລລົງສູ່ແກ້ມເມື່ອພວກເຂົາລະນຶກເຖິງພຣະເຢຊູທີ່ຖືກຂ້ຽນຕີ ແລະ ຫົວໃຈຂອງພວກນາງກໍເຈັບປວດເມື່ອພາບການສິ້ນພຣະຊົນຂອງພຣະເຢຊູ ເຂົ້າມາໃນຫົວ. ສະຫາຍຜູ້ເປັນທີ່ຮັກຂອງພວກເຂົາ, ຜູ້ປົກປ້ອງຄຸ້ມຄອງ ແລະ ຜູ້ຊົງເປັນກະສັດ ໄດ້ຕາຍໄປແລ້ວ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນເລື່ອງນີ້? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ຍ້ອນຫຍັງຈຶ່ງເປັນເລື່ອງສຳຄັນກ່ຽວກັບການສິ້ນພຣະຊົນຂອງພຣະເຢຊູທີ່ຖືກທຳນວາຍໄວ້ໂດຍຜູ້ທຳນວາຍຕ່າງໆໃນພຣະຄຳພີເດີມ?*
*໓. ມາລີໄດ້ເວົ້າເຖິງຄຳສາບແຊ່ງຂອງຄວາມບາບ ແລະ ຄວາມຕາຍ. ການສິ້ນພຣະຊົນຂອງພຣະເຢຊູເອົາຊະນະສອງຢ່າງນີ້ໄດ້ແນວໃດ?*
*໔. ມາລີບອກກັບຣີເບກາວ່າ "ເຈົ້າຄືລູກຍິງທີ່ຮັກ". ການສິ້ນພຣະຊົນ ແລະ ການຄືນພຣະຊົນຂອງພຣະເຢຊູ ສະແດງໃຫ້ເຫັນວ່າພວກເຮົາເປັນລູກທີ່ຮັກໂດຍພຣະເຈົ້າຢ່າງໃດ?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ຍ້ອນຫຍັງການປາກົດໂຕຂອງພຣະເຢຊູຕໍ່ມາລີ ແລະ ກັບອັກຄະສາວົກຫຼາຍເທື່ອຫຼັງຈາກທີ່ພຣະອົງສິ້ນພຣະຊົນຈຶ່ງເປັນເຫດສຳຄັນ?*
*໖. ອ່ານ ພສສ ໒໒ ນຳກັນ. ພຣະຄຳຂໍ້ໃດທີ່ຢືນຢັນວ່າພຣະເຢຊູຄືພຣະເມສີອາ?*
*໗. ສາມມື້ໃນການສິ້ນພຣະຊົນ ແລະ ການຄືນພຣະຊົນຂອງພຣະເຢຊູ. ເຈົ້າຄິດວ່າອັກຄະສາວົກຮູ້ສຶກຢ່າງໃດເມື່ອພຣະອົງໄດ້ສິ້ນພະຊົນແລ້ວ?*

ໃຊ້ QR ລະຫັດນີ້ເພື່ອເບິ່ງສ່ວນນີ້ໃນພາສາຂອງທ່ານບົນອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ
ໄຕ່ຕອງເຖິງຄຳທຳນວາຍຂອງຂອງເອຊາຢາ, "ແຕ່ຍ້ອນການບາບຂອງພວກທ່ານນັ້ນ ທ່ານຈຶ່ງໄດ້ຮັບບາດເຈັບ ຖືກຂ້ຽນຖືກຕີຍ້ອນການຮ້າຍຂອງພວກເຮົາ. ພວກເຮົາໄດ້ຮັບການປິ່ນປົວໃຫ້ດີ ຍ້ອນໂທດກຳທີ່ທ່ານຮັບ." (ເອຊາຢາ ໕໓:໕). ພຣະເຢຊູຊົງຮັກມະນຸດ. ພຣະອົງຊົງໃຫ້ຄວາມສຳຄັນກັບພວກເຮົາຈົນຍອມຖືກຄຳສາບແຊ່ງ. ທົນຕໍ່ການແຍກຈາກພຣະເຈົ້າ ແລະ ສິ້ນພຣະຊົນເພາະເຫັນແກ່ພວກເຮົາ ແລະ ເມື່ອພຣະອົງຊົງຟື້ນຈາກຄວາມຕາຍ. ພຣະອົງກໍຊົງພິສູດວ່າພຣະອົງເປັນພຣະເຈົ້າທີ່ແທ້ຈິງ. ພິຈາລະນາເຖິງຄວາມເມດຕາ ແລະ ອຳນາດທີ່ພຣະອົງຊົງສຳແດງໃຫ້ເຫັນໃນການສິ້ນພຣະຊົນ ແລະ ການຄືນພຣະຊົນຂອງພຣະອົງ. ພິຈາລະນາເຖິງພຣະເຢຊູ.

---

ແນມໄປທາງໜ້າ

### ນຳໄປໃຊ້
- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ
- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ
- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ
- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໙ ການຮູ້ຈັກພຣະເຢຊູ ແລະ ການອະໄພຂອງພຣະອົງ
## ຄວາມເຊື່ອຂອງເຮຟກ້າ (ລູກາ ໗:໓໖-໕໐)

ແນມຄືນຫຼັງ

### ການຫ່ວງໃຍ
- ແບ່ງປັນວ່າທ່ານເປັນແນວໃດ.
- ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ
- ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່
- ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ
- ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນ ຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ພວກເຮົາມາເຖິງຕອນສຸດທ້າຍຂອງໜັງແລ້ວ. ເມື່ອມາລີໄດ້ທົບທວນເລື່ອງລາວຂອງພຣະເຈົ້າ. ພຣະອົງຊົງເຫັນ ແລະ ຮູ້ຈັກທຸກຄົນ, ພຣະອົງຄືພຣະຜູ້ຊ່ວຍໃຫ້ພົ້ນ, ພຣະເຈົ້າຜູ້ຊົງຮັບສະພາບເປັນມະນຸດ, ຊົງສະເໜີອິດສະຫຼະພາບ ແລະ ການປົດປ່ອຍຈາກພັນທະນາການ, ພຣະອົງຊົງມີຣິດທານຸພາບພໍທີ່ຈະເຮັດໃຫ້ຄົນຕາຍຟື້ນຄືນມາໃໝ່ ແລະ ຊົງມີພຣະເມດຕາພໍທີ່ຈະພົບກັບຄວາມໂສກເສົ້າ ແລະ ຄວາມທຸກທົນທີ່ເລິກຢູ່ພາຍໃນຈິດໃຈຂອງພວກເຂົາ, ພຣະອົງມີສິດອຳນາດທັງໝົດທີ່ຈະໃຫ້ອະໄພ ແລະ ໄຖ່ເຮົາໄດ້. ແມ່ນແຕ່ການກະທຳທີ່ໜ້າອັບອາຍທີ່ສຸດຂອງເຮົາ ແລະ ຖ້ອຍຄຳຂອງພຣະອົງເປັນຄຳຕັດສິນສຸດທ້າຍ, ແມ່ນແຕ່ຄວາມຕາຍ. ເບິ່ງວ່າເລຟກ້າຕອບສະໜອງຢ່າງໃດກັບພຣະເຢຊູ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈົບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນທົບທວນຂອງມາລີກ່ຽວກັບຊີວິດຂອງພຣະເຢຊູ? ສິ່ງໃດທີ່ດຶງດູດຄວາມສົນໃຈຂອງເຈົ້າ?*
*໒. ບົດບາດຂອງພຣະເຢຊູແບບໃດທີ່ມີຄວາມໝາຍທີ່ສຸດສຳລັບເຈົ້າ?*
*໓. ຄວາມບາບຂອງພວກເຮົາຄືນດີກັບພຣະເຈົ້າໄດ້ຢ່າງໃດ?*
*໔. ເຮຟກ້າບໍ່ໝັ້ນໃຈວ່ານາງໄດ້ຮັບການອະໄພແລ້ວ. ຍ້ອນຫຍັງຈຶ່ງເປັນເລື່ອງສຳຄັນທີ່ຄວາມໄວ້ວາງໃຈຂອງນາງສຸດທ້າຍແລ້ວກໍຢູ່ໃນຖ້ອຍຄຳຂອງພຣະເຈົ້າ ແລະ ການອະໄພຂອງພຣະອົງ ບໍ່ແມ່ນເພາະນາງຮູ້ສຶກ ຫຼື ການກະທຳຂອງນາງ?*
*໕. ມີຜູ້ໃດໄດ້ອະທິຖານໄປພ້ອມໆກັບເຮຟກ້າບໍ່? ມີຜູ້ໃດຕ້ອງການບໍ່?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໖. ຍ້ອນຫຍັງຈຶ່ງເປັນເລື່ອງທີ່ສຳຄັນທີ່ຜູ້ຕິດຕາມພຣະເຢຊູຈະຕ້ອງໝັ້ນໃຈວ່າຕົນເອງລອດພົ້ນແລ້ວ?*
*໗. ເຈົ້າມີຄວາມກ່ຽວຂ້ອງກັບຄວາມລັງເລຂອງເຮຟກ້າບໍ່? ຖ້າມີ ໃຫ້ແບ່ງປັນຄວາມລັງເລ ຫຼື ຄວາມກັງວົນນັ້ນ.*
*໘. ຕອນນີ້ເຈົ້າກຳລັງພິຈາລະນາຍອມຈຳນົນມອບຊີວິດໃຫ້ກັບພຣະເຢຊູຢູ່ບໍ່?*

ໃຊ້ QR ລະຫັດນີ້ເພື່ອເບິ່ງ ສ່ວນນີ້ໃນພາສາຂອງທ່ານບົນ ອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ
ໃນຕອນນີ້ ເຮົາຈະເຫັນວ່າເຮຟກ້າຕັດສິນໃຈທີ່ຈະຕິດຕາມພຣະເຢຊູ ລອງພິຈາລະນາເຖິງຜົນກະທົບຂອງການຕິດຕາມພຣະອົງ ແລະ ສິ່ງນັ້ນຈະມີຄວາມໝາຍແນວໃດກັບຊີວິດຂອງທ່ານ. ທ່ານປາຖະໜາທີ່ຈະໄດ້ຮັບການອະໄພບາບຫຼືບໍ່? ທ່ານຕ້ອງການໃຫ້ໃຜຈັກຄົນທີ່ເຂົ້າໃຈ ແລະ ເບິ່ງເຫັນທ່ານ ຫຼືບໍ່? ທ່ານຕ້ອງການໃຜຈັກຄົນທີ່ທ່ານເພິ່ງພາໄດ້ບໍ່? ພຣະເຢຊູຂໍພຽງຄວາມເຊື່ອອັນແທ້ຈິງ ແລະ ການສຳນຶກຜິດທີ່ແທ້ຈິງໃນບາບ. ເມື່ອທ່ານມາຫາພະອົງແລ້ວ ທ່ານສາມາດໝັ້ນໃຈໄດ້ວ່າພຣະອົງຊົງເຫັນ ແລະ ໃຫ້ກຽດຄວາມເຊື່ອຂອງທ່ານໃນຕອນນີ້ ແລະ ຕະຫຼອດໄປເປັນນິດ. ຕອນນີ້ທ່ານໄດ້ພິຈາລະນາເຖິງພຣະເຢຊູ ຮອດເວລາທີ່ຕ້ອງຕັດສິນໃຈແລ້ວ. ທ່ານຈະຕິດຕາມພຣະອົງໄປບໍ?

** ໝາຍເຫດສຳລັບຜູ້ນຳ: ສິ່ງສຳຄັນຄືການໃຫ້ໂອກາດໃຜຈັກຄົນໄດ້ຕັດສິນໃຈຕິດຕາມພຣະເຢຊູ. ຢ່າລືມຖາມໃນກຸ່ມວ່າ "ມີໃຜໄດ້ອະທິຖານພ້ອມກັບເຮຟກ້າບໍ່ ມີຜູ້ໃດຕ້ອງການອະທິຖານເໝືອນກັນບໍ່?" ຈະເປັນການດີກວ່າ ຖ້າຫາກສອບຖາມກັບຜູ້ຍິງແຕ່ລະຄົນເປັນການສ່ວນຕົວ.*

---

ແນມໄປທາງໜ້າ

### ນຳໄປໃຊ້
- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ
- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ
- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ
- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ບົດຮຽນທີ ໑໐ ໃຊ້ຊີວິດຮ່ວມກັບພຣະເຢຊູ

## ການໃຊ້ຊີວິດແບບຄຣິສຕຽນ (ມັດທາຍ ໒໘:໑໘-໒໐)

ແນມຄືນຫຼັງ

### ການຫ່ວງໃຍ

• ແບ່ງປັນວ່າທ່ານເປັນແນວໃດ.
• ຝຶກຝົນການເປັນຄົນໃຈກວ້າງ.

### ນະມັດສະການ

• ນະມັດສະການຮ່ວມກັນດ້ວຍ ບົດເພງ ແລະ ອະທິຖານ.

### ສະເຫຼີມສະຫຼອງຄວາມສັດຊື່

• ໜູນໃຈເຊິ່ງກັນ ແລະ ກັນໃນໄຊຊະນະ.

### ຊອກຫາວິໄສທັດ

• ໜູນໃຈເຊິ່ງກັນ ແລະ ກັນໃຫ້ມີຄວາມມຸ່ງໝັ້ນ ຜູ້ຕິດຕາມພຣະເຢຊູ.

---

ແນມຂຶ້ນເທິງ

ເຊັ່ນດຽວກັນກັບມາລີທີ່ໄດ້ຮັບການປ່ຽນແປງ ການຕິດຕາມພຣະເຢຊູ ໝາຍຄວາມວ່າທ່ານຈະໄດ້ຮັບການປ່ຽນແປງເຊັ່ນດຽວກັນ. ພຣະອົງຊົງເອີ້ນເຮົາໄປສູ່ສິ່ງທີ່ໃຫຍ່ກວ່າ ການດຳເນີນຊີວິດເໝືອນກັນກັບພຣະອົງ, ດຳເນີນຊີວິດດ້ວຍສັກສີ, ຄວາມຫວັງ ແລະ ຄວາມດີງາມ ພຣະອົງຊົງເອີ້ນເຮົາເພື່ອແບ່ງປັນຖ້ອຍຄຳແຫ່ງຊີວິດທີ່ປ່ຽນແປງເຮົາໄປສູ່ຜູ້ອື່ນ. ພຣະອົງຊົງເອີ້ນພວກເຮົາໃຫ້ໄວ້ວາງໃຈໃນພຣະຄຳຂອງພຣະອົງ ແລະ ພຣະບັນຊາຂອງພຣະອົງໂດຍຮູ້ວ່າພຣະອົງຊົງຢູ່ກັບເຮົາ, ພຣະອົງຊົງເອີ້ນເຮົາໃຫ້ພັກພິງໃນພຣະອົງຢ່າງໝັ້ນຄົງໂດຍຮູ້ວ່າພຣະອົງຊົງຮູ້ຈັກ ແລະ ເຂົ້າໃຈທຸກສ່ວນຂອງເຮົາ.

**ຂັ້ນຕອນທີ ໑: ການເປີດໜັງ.** ໃຫ້ເບິ່ງໜັງເລື່ອງນັ້ນສອງຮອບ.
**ຂັ້ນຕອນທີ ໒: ການບອກເລົ່າ.** ຂໍໃຫ້ສະມາຊິກພາຍໃນກຸ່ມເລົ່າເລື່ອງຄືນດ້ວຍຄຳເວົ້າຂອງຕົນເອງ.
**ຂັ້ນຕອນທີ ໓: ຈັບສົມບູນ.** ອະນຸຍາດໃຫ້ກຸ່ມນັ້ນຕື່ມຊ່ອງວ່າງທີ່ຂາດຫາຍໄປ ຫຼື ເຮັດໃຫ້ຖືກຕ້ອງ.
**ຂັ້ນຕອນທີ ໔: ສົນທະນາ.** ສົນທະນາກັນດ້ວຍຄຳຖາມ:

*໑. ແມ່ນຫຍັງທີ່ເຈົ້າມັກທີ່ສຸດໃນການຊົງເອີ້ນຂອງຊີວິດຄຣິສຕຽນ? ສິ່ງໃດທີ່ດຶງດູດຄວາມສົນໃຈເຈົ້າ?*
*໒. ການຕິດຕາມພຣະເຢຊູເປັນແບບໃດ?*
*໓. ຄຳເວົ້າສຸດທ້າຍຂອງພຣະເຢຊູສິ່ງຜົນກະທົບຫຍັງກັບເຈົ້າ?*
*໔. ໃນສ່ວນໃດຂອງຊີວິດເຈົ້າທີ່ຕ້ອງການໃຫ້ພຣະເຢຊູປ່ຽນແປງ?*

**ລົງເລິກຫຼາຍຂຶ້ນ (ສົນທະນາກັນຕື່ມຫາກຍັງມີເວລາ...)**
*໕. ສິ່ງໃດທີ່ເຈົ້າຢ້ານຫຼາຍທີ່ສຸດໃນການອະນຸຍາດໃຫ້ພຣະເຈົ້າປ່ຽນແປງຊີວິດ?*
*໖. ຄຳເວົ້າຂອງພຣະເຢຊູໄດ້ທ້າທາຍຫຍັງກັບເຈົ້າ?*

ໃຊ້ QR ລະຫັດນີ້ເພື່ອເບິ່ງສ່ວນນີ້ໃນພາສາຂອງທ່ານບົນອຸປະກອນສະມາດຂອງທ່ານ.

### ບົດສະຫຼຸບ

ໄດ້ຕອງເຖິງສາມອົງປະກອບສຳຄັນຂອງພຣະດຳລັດສຸດທ້າຍຂອງພຣະເຢຊູທີ່ກ່າວແກ່ສາວົກຂອງພຣະອົງ ພຣະເຢຊູປະກາດວ່າພຣະອົງຊົງໄດ້ຮັບຣິດອຳນາດທັງໝົດໃນສະຫວັນ ແລະ ໂລກ. ພຣະອົງສັ່ງໃຫ້ເຮົາອອກໄປ ແລະ ສ້າງສາວົກ. ສອນໃນທຸກສິ່ງທີ່ພຣະອົງຊົງບັນຊາ ແລະ ພຣະອົງຊົງຢືນຢັນວ່າພຣະອົງຈະຢູ່ກັບພວກເຮົາຈົນສິ້ນໂລກນີ້. ພິຈາລະນາວ່າຈະມີຄວາມໝາຍຢ່າງໃດຖ້າຊີວິດຂອງທ່ານສະທ້ອນເຖິງການປະກາດຄັ້ງສຸດທ້າຍຂອງພຣະເຢຊູ, ພຣະບັນຊາ ແລະ ຄວາມເຊື່ອໝັ້ນ. ພິຈາລະນາເຖິງພຣະເຢຊູ.

ບໍ່ວ່າທ່ານຈະພ້ອມ ຫຼືບໍ່ ໃນການຕິດຕາມພຣະເຢຊູ ທ່ານຕ້ອງການທີ່ສືບຕໍ່ຮຽນຮູ້ກ່ຽວກັບພຣະອົງບໍ່ ແລະ ທ່ານຈະຕິດຕາມພຣະອົງຢ່າງໃດ? ມີຫຼາຍໆກາລະໂອກາດທີ່ສະດວກສຳລັບທ່ານໃນການສືບຕໍ່ຮຽນຮູ້ ແລະ ເຕີບໃຫຍ່ຂຶ້ນທາງຝ່າຍຈິດວິນຍານດ້ວຍກັນ. ເຖິງແມ່ນວ່ານີ້ຈະເປັນບົດສະຫຼຸບຂອງອຸປະກອນ *ພິຈາລະນາເຖິງພຣະເຢຊູ.* ມີຫຼາຍໆຂັ້ນຕອນທີ່ທ່ານສາມາດຮັບເອົາໄດ້ໃນຄັ້ງຕໍ່ໄປ. ສົນທະນານຳກັນວ່າຂັ້ນຕອນຕໍ່ໄປຄວນຈະເປັນແບບໃດສຳລັບທ່ານ *Rivka* ແລະ *Knowing Jesus* ແມ່ນຄຳແນະນຳຂອງ Jesus Film Project's ໃນຂັ້ນຕໍ່ໄປ. ຂໍ້ມູນເພີ່ມເຕີມລວມຢູ່ໃນເຄື່ອງມືນີ້ Step Four of the Leader's Guide. **ທ່ານອາດຈະຕ້ອງການແບ່ງປັນສິ່ງທີ່ທ່ານໄດ້ຮຽນຮູ້ກັບຄົນອື່ນໆ ແລະ ກໍເປັນກຸ່ມຂອງທ່ານເອງ. ສອບຖາມຄຳແນະນຳ ແລະ ການສະໜັບສະໜູນຈາກຫົວໜ້າກຸ່ມຂອງທ່ານ ຖ້າຫາກນີ້ແມ່ນຂັ້ນຕອນທີ່ຖືກຕ້ອງສຳລັບທ່ານ.**

---

ແນມໄປທາງໜ້າ

### ນຳໄປໃຊ້

- ພຣະອົງໄດ້ສາທິດເຖິງຄຸນຄ່າໃນການເຊື່ອວາງໃຈໃນພຣະອົງຢ່າງໃດ?
- ທ່ານຈະຕອບສະໜອງໃນສິ່ງທີ່ໄດ້ຮຽນກ່ຽວກັບພຣະເຈົ້າຢ່າງໃດ?

### ຝຶກຝົນ

- ຝຶກເລົ່າເລື່ອງໃຫ້ຄົນອື່ນຟັງ.

### ແບ່ງປັນ

- ທ່ານຈະແບ່ງປັນເລື່ອງນີ້ກັບໃຜ?

### ອະທິຖານ

- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານໄດ້ຮຽນ.
- ອະທິຖານເພື່ອເຊິ່ງກັນ ແລະ ກັນ.
- ອະທິຖານເພື່ອຄົນອື່ນໃນຊຸມຊົນ.

# ພິຈາລະນາເຖິງພຣະເຢຊູ

## ກົນລະຍຸດ ໑໐ ອາທິດສຳລັບ ກຸ່ມຊຸມຊົນນ້ອຍໆ

Jesus Film Project®
A Cru Ministry